**ການບ້ານບົດທີ 3 ພາກຕົ້ນ**

# ສະໄໝໄວໜຸ່ມຂອງໂຊໂລ

*ໃນບົດນີ້ ເຮົາຈະຮຽນເລື່ອງສະໄໝທີ່ໂຊໂລອອກຈາກບ້ານເກີດເມືອງນອນ ໄປສຶກສາຊັ້ນສູງໃນກຸງເຢລູຊາເລັມ.*

**1** ຊົນຊາດໃດກໍມີປະເທດຂອງຕົນເອງ. ໃນສະໄໝພະເຢຊູ ຊາດຢິວຢູ່ປະຈຳໃນປະເທດທີ່ເອີ້ນຊື່ວ່າ ປາແລັດສະຕິນ.

ກ. ໃນສະໄໝຂອງອັບລາຮາມ ດິນແດນນັ້ນເອີ້ນວ່າຢ່າງໃດ? ____________________

ຂ. ໃນສະໄໝຂອງໂຊໂລ ດິນແດນນັ້ນເອີ້ນວ່າຢ່າງໃດ? ________________________

**2** ແຕ່ໂຊໂລບໍ່ໄດ້ເກີດໃນປາແລັດສະຕິນ. ຕາມ ກຈກ 22:3 ເຫັນວ່າ

ກ. ເພິ່ນເກີດໃນເມືອງໃດ? ____________________________________________

ຂ. ແຂວງໃດ? ______________________________________________________

**3** ກ. ໂຊໂລເປັນຊາດໃດ? ____________________________________________

ຂ. ແຕ່ບ້ານເກີດເມືອງນອນຢູ່ເມືອງໃດ? __________________________________

**4** ໂຊໂລບໍ່ໄດ້ເກີດໃນປະເທດປາແລັດສະຕິນ ແຕ່ຍັງຖືວ່າເປັນສັນຊາດຢິວຢູ່. ບາງເທື່ອຄົນຢິວທີ່ເກີດ ນອກປະເທດອາດຈະຖືວ່າເປັນພົນລະເມືອງໃນປະເທດທີ່ເຂົາເກີດ ທັງເປັນພົນລະເມືອງຢິວອີກດ້ວຍ

ກ. ພໍ່ແມ່ຂອງໂຊໂລເປັນສັນຊາດໃດ? ___________________________________

ຂ. ດັ່ງນັ້ນ ຖືວ່າໂຊໂລກໍເປັນສັນຊາດໃດ? ________________________________

ຄ. ແຕ່ໂຊໂລເກີດໃນເມືອງ _________ ແຂວງ _____________ ທີ່ຢູ່ຫ່າງໄກຈາກປາແລັດສະຕິນ. (ຕື່ມຄວາມທີ່ຂາດ)

**5** ມີສັນຊາດຢິວຫຼາຍຄົນໃນໂລກເຖິງທຸກວັນນີ້ ແລ້ວເຂົາກະຈັດກະຈາຍໄປຫຼາຍປະເທດ.

ກ. ແມ່ນຜູ້ໃດເກີດໃນເມືອງຕາໂຊແຂວງກີລີເກຍ? ____________________________

ຂ. ປະເທດຂອງຊາດຢິວໃນສະໄໝນັ້ນເອີ້ນວ່າຢ່າງໃດ? ________________________

ຄ. ໂຊໂລຮັບສັນຊາດໃດຈາກພໍ່ແມ່? ___________________________________

*ໃນທຸກວັນນີ້ ປະເທດອິສຣາເອັນເປັນປະເທດຂອງຄົນຢິວ.*

**6** ເດັກຜູ້ຊາຍຄົນຢິວທຸກຄົນເຂົາຮຽນອ່ານຮຽນຂຽນແລະຮຽນອາຊີບດ້ວຍ.

ກ. ພະເຢຊູຮຽນອາຊີບໃດ? (ມາລະໂກ 6:3) ______________________________

ຂ. ໂຊໂລຮຽນອາຊີບໃດ? (ກຈກ 18:3) _________________________________

**7** ໃຫ້ເບິ່ງຮູບເດັກທັງສອງຕໍ່ໄປ:




ກ. ຮູບຂ້າງໃດສະແດງເຖິງພະເຢຊູ? ____________________

ຂ. ຮູບຂ້າງໃດສະແດງເຖິງໂຊໂລ? ____________________

**8** ເມືອງຕາໂຊເປັນສູນກາງແຫ່ງການຄ້າ ແລ້ວຄົນຢິວຫຼາຍຄົນມັກເປັນພໍ່ຄ້າ ແຕ່ໂຊໂລບໍ່ໄດ້ຮຽນການ ຄ້າ. ເພິ່ນຮຽນເຮັດຫຍັງ? ____________________

**9** ເຖິງວ່າເພິ່ນຮຽນເຮັດຜ້າເຕັນກໍຕາມ ເພິ່ນກໍຍັງມີຄວາມສົນໃຈຢ່າງອື່ນຫຼາຍ:
<u>ໃນເມືອງຕາໂຊ</u>




ກ. ໂຊໂລຈະຕ້ອງໄປຮຽນພະທຳ ໃນປະເທດໃດ?

____________________

ຂ. ໃນກຸງໃດ? (ຕາມຮູບຂ້າງຊ້າຍນັ້ນ)

____________________




**10** ເພິ່ນອາດຈະຂີ່ເຮືອໄປ. (ເບິ່ງແຜນທີ່ຂ້າງຊ້າຍ)

ກ. ໂຊໂລອອກຈາກເມືອງໃດ?

____________________

ຂ. ໄປຮຽນໃນກຸງໃດ?

____________________

ຄ. ໄປຈັກຫຼັກ?

____________________

**11** ກ. ໂຮງຮຽນພະທຳນັ້ນຢູ່ໃນກຸງໃດ?

______________________________

ຂ. ໃນປະເທດໃດ?

______________________________

ຄ. ໂຊໂລເກີດໃນເມືອງໃດ?

______________________________

ງ. ແຂວງໃດ?

______________________________






**12** ເຢລູຊາເລັມເປັນກຸງທີ່ງາມຫຼາຍ ຕັ້ງໄວ້ຢູ່ໂນນເຂົາ ແລ້ວມີກຳແພງອ້ອມ.

ກ. ມີຫຍັງທີ່ປ້ອງກັນກຸງເຢລູຊາ ເລັມ?

______________________________

ຂ. ເຢລູຊາເລັມຢູ່ໃນປະເທດ ໃດ?

______________________________

## ຮຽນຄືນ

**13** ກ. ຕາໂຊຢູ່ໃນແຂວງໃດ? ______________________________

ຂ. ໂຊໂລຮຽນອາຊີບໃດໃນເມືອງຕາໂຊ? ______________________________

ຄ. ໂຮງຮຽນທຳທີ່ໂຊໂລຮຽນຢູ່ໃນກຸງໃດ? ______________________________

ງ. ປະເທດໃດ? ______________________________




**14** ກ. ເລກໃດໃນແຜນທີ່ນັ້ນໝາຍເມືອງ ຕາໂຊໄວ້? ___

ຂ. ຢູ່ໃນແຂວງໃດ? ____________________

ຄ. ເລກໃດໝາຍເຢລູຊາເລັມ? ______________

ງ. ເຢລູຊາເລັມເປັນເມືອງຫຼວງຂອງຊາດຢິວ ຢູ່ໃນ ປະເທດໃດ? ____________________

**15** ຕາມທີ່ທ່ານຮຽນມາໃນບົດສອງພາກຕົ້ນ ແມ່ນຜູ້ໃດທີ່ຢູ່ໃນສະໄໝດຽວກັນກັບໂຊໂລ?

______________________________________________________________

**16** ພະເຢຊູເປັນຊາດຢິວເຊັ່ນດຽວກັນກັບໂຊໂລ ແຕ່ພະອົງເກີດໃນປະເທດປາແລັດສະຕິນ. ໂຊໂລແລະພະເຢຊູອາດຈະຢູ່ໃນປາແລັດສະຕິນໃນເວລາດຽວກັນ ເພາະໂຊໂລໄປສຶກສາໃນກຸງເຢ ລູຊາເລັມໃນເມື່ອເວລາດຽວທີ່ພະເຢຊູຢູ່ ແຕ່ເຂົາຢູ່ຄົນລະບ່ອນ. ພະເຢຊູຝຶກເປັນຊ່າງໄມ້ໃນແຂວງ ຄາລີເລພາກເໜືອ ແຕ່ໂຊໂລຮຽນທຳໃນກຸງເຢລູຊາເລັມເຂດພາກໃຕ້. ໂຊໂລຮຽນພະທຳໃນກຸງໃດ? ______________________________

**17** ກ. ໃນເມື່ອໄວໜຸ່ມໂຊໂລຢູ່ໃນປະເທດດຽວກັນກັບພະເຢຊູບໍ່? ____________

ຂ. ເຂົາຢູ່ໃນແຂວງດຽວກັນບໍ່? ______________________________

ຄ. ຄົນໃດເປັນຊ່າງໄມ້ໃນພາກເໜືອ? ____________________________

ງ. ຄົນໃດຮຽນທຳໃນພາກໃຕ້? ______________________________

*ຈົ່ງຮັບພິຈາລະນາ*

*ພະທຳ ລູກາ 2:52 ບອກວ່າ ພະເຢຊູຈະເລີນຂຶ້ນໃນດ້ານສະຕິປັນຍາແລະໃນດ້ານຮ່າງກາຍ. ຄວນທີ່ພໍ່ແມ່ຂອງເດັກນ້ອຍຈະສວຍໂອກາດໃຫ້ເດັກຮຽນຈຶ່ງຈະເປັນຂ້າໃຊ້ຂອງພະເຈົ້າໄດ້.*

*ຖ້າທ່ານມີລູກໃຫ້ຮັບພິຈາລະນາດັ່ງຕໍ່ໄປນີ້:*

- *ທ່ານສົນໃຈໃນດ້ານສຶກສາຂອງລູກບໍ່? (ບໍ່ຕ້ອງຂຽນຄຳຕອບ)*
- *ທ່ານຊ່ວຍເຂົາໃນການຮຽນບໍ່?*

*ຖ້າທ່ານເປັນນັກສຶກສາ ໃຫ້ຮັບພິຈາລະນາດັ່ງຕໍ່ໄປນີ້.*

- *ທ່ານສວຍໂອກາດເພີ້ມຄວາມຮູ້ຢູ່ບໍ່?*
- *ໃຫ້ທ່ານສຳນຶກຕົວວ່າ ພະເຈົ້າຈະຕຽມຕົວທ່ານໃຫ້ສົມບູນເພື່ອຮັບໃຊ້ພະອົງຫັ້ງ.*

*ຖ້າທ່ານຮຽນຈົບແລ້ວ*

- *ທ່ານອາດຈະຮຽນຕໍ່ໄປໄດ້ບໍ່?*
- *ໃຫ້ທ່ານອົບຮົມກັບຜູ້ນຳໃນເລື່ອງນີ້.*

ຄຳຕອບ:

**1** *ກ. ການາອານ ຂ. ປາແລັດສະຕິນ*

**2** *ກ. ຕາໂຊ ຂ. ກີລີເກຍ*

**3** *ກ. ຢິວ ຂ. ຕາໂຊ*

**4** *ກ. ຢິວ ຂ. ຢິວ ຄ. ຕາໂຊ. . . ກີລີເກຍ*

**5** *ກ. ໂຊໂລ ຂ. ປາແລັດສະຕິນ ຄ. ຊາດຢິວ*

**6** *ກ. ຊ່າງໄມ້ ຂ. ຊ່າງເຮັດຜ້າເຕັນ*

**7** *ກ. ຂ້າງຂວາ ຂ. ຂ້າງຊ້າຍ*

**8** *ເຮັດຜ້າເຕັນ*

**9** *ກ. ປາແລັດສະຕິນ ຂ. ເຢລູຊາເລັມ*

**10** *ກ. ຕາໂຊ ຂ. ເຢລູຊາເລັມ ຄ. 600*

**11** *ກ. ເຢລູຊາເລັມ ຂ. ປາແລັດສະຕິນ ຄ. ຕາໂຊ ງ. ກີລີເກຍ*

**12** *ກ. ກຳແພງ ຂ. ປາແລັດສະຕິນ*

**13** *ກ. ກີລີເກຍ ຂ. ເຮັດຜ້າເຕັນ ຄ. ເຢລູຊາເລັມ ງ. ປາແລັດສະຕິນ*

**14** *ກ. ເລກ 1 ຂ. ກີລີເກຍ ຄ. ເລກ 3 ງ. ປາແລັດສະຕິນ*

**15** *ພະເຢຊູ*

**16** *ເຢລູຊາເລັມ*

**17** *ກ. ຢູ່ໃນປະເທດດຽວກັນ ຂ. ບໍ່ຢູ່ໃນແຂວງດຽວກັນ ຄ. ພະເຢຊູ ງ. ໂຊໂລ*

**ການບ້ານບົດທີ 3 ພາກປາຍ**

# ໂຮງຮຽນທຳຂອງຄາມາລີເອນ

*ໂຊໂລເປັນສັນຊາດຢິວ ແຕ່ເພິ່ນເກີດນອກປະເທດແລະຢູ່ນອກປະເທດ ຈົນໄດ້ເຂົ້າໂຮງຮຽນ ທຳຂອງຄາມາລີເອນ. ທີ່ເພິ່ນເດີນທາງເຂົ້າມາຮຽນໃນເມືອງຫຼວງຂອງຊາດຢິວ ເພິ່ນໄດ້ເຫັນກຸງເຢລູຊາ ເລັມກັບຕາ ແລະກໍ່ມີຄວາມພາກພູມໃຈຫຼາຍ*

**1** ກ. ອາຈານທີ່ສອນພະທຳໃຫ້ໂຊໂລຊື່ຫຍັງ? (ເລືອກ)

_______ ຄັບລີເອນ _______ ຄາມາລີເອນ _______ ຄາໍມີ

ຂ. ໂຮງຮຽນນັ້ນຢູ່ໃສ? ________________________________________________

ຄ. ໂຊໂລຈະຮຽນເລື່ອງຫຍັງ? ________________________________________________

*ພະທຳນັ້ນຄືພະບັນຍັດຂອງໂມເຊ*




**2** ໜັງສືທີ່ເຂົາໃຊ້ຕອນນັ້ນ ບໍ່ແມ່ນປື້ມ ແບບທີ່ເຮົາໃຊ້ທຸກວັນນີ້ ແຕ່ເປັນໜັງສັດ ເປັນມ້ວນຢ່າງທີ່ເຫັນໃນຮູບ.

ກ. ໃນຮູບນີ້ໂຊໂລອ່ານພະບັນຍັດຂອງໃຜ?

________________________________

ຂ. ອາຈານສອນຊື່ຫຍັງ? _______________

________________________________

**3** ໃນສະໄໝຂອງໂຊໂລ ຍັງບໍ່ມີພະທຳພາກພະສັນຍາໃໝ່ເທື່ອ. ພະບັນຍັດຂອງໂມເຊມີແຕ່ຢູ່ໃນພະຄຳພີພາກພະສັນຍາເດີມ.

ກ. ດັ່ງນັ້ນໂຊໂລຮຽນຈາກພະຄຳພີພາກໃດ? ________________________________

ຂ. ເພິ່ນອ່ານພະບັນຍັດຂອງໃຜ ເປັນຕົ້ນ? ________________________________

ຄ. ອາຈານທີ່ສອນຄືໃຜ? ________________________________________________

*ຕໍ່ໄປອີກຫຼາຍປີ ໂຊໂລຮຽນເລື່ອງສະໄໝໄວໜຸ່ມໃນໂຮງຮຽນນັ້ນ.*
*ໃຫ້ອ່ານ ກຈກ 22:3*

**4** (ທວນຄືນ)

ກ. ໂຊໂລເກີດໃນເມືອງໃດ? ________________________________________________

ຂ. ແຂວງໃດ? ________________________________________________

ຄ. ເກີດເປັນສັນຊາດໃດຈາກພໍ່ແມ່? ________________________________________

ງ. ເມື່ອເກີດມາໄດ້ 8 ວັນເພິ່ນຮັບພິທີຫຍັງ? ________________________________

ຈ. ເພິ່ນໄປຮຽນຕໍ່ໃນກຸງໃດ? ____________________

ສ. ແມ່ນໃຜເປັນອາຈານສອນ? ____________________

ຊ. ສອນເລື່ອງພະບັນຍັດໃດເປັນຕົ້ນ? ____________________

ຍ. ຕອນນັ້ນເຂົາມີແຕ່ພາກໃດໃນພະຄຳພີ? ____________________

**5** ໂຊໂລສຶກສາເລື່ອງພະຄຳພີເດີມຈົນກວ່າເພິ່ນຮູ້ເລື່ອງປະຫວັດຂອງອັບລາຮາມ ແລະໂມເຊ ເປັນຢ່າງດີ. ໃນ ຄລຕ 3:17 ໂຊໂລຂຽນວ່າ ພະບັນຍັດຂອງໂມເຊ ມາພາຍຫຼັງຄຳສັນຍາທີ່ໃຫ້ແກ່ອັບລາຮາມ ຈັກປີ? ____________________

**6** ແມ່ນໃຜທີ່ຈົດພະບັນຍັດໄວ້ ຫຼັງຈາກອັບລາຮາມຮັບຄຳສັນຍາ 430 ປີ? __________

**7** ກ. ມີອີກເລື່ອງໜຶ່ງທີ່ໂຊໂລຮຽນຈາກຄາມາລີເອນ. ເພິ່ນຮຽນວ່າໂມເຊຢູ່ເຝົ້າພະຜູ້ເປັນເຈົ້າເທິງພູເຂົາໃດ? (ອພຍ 34:29) ____________________

ຂ. ເພິ່ນເຝົ້າພະຜູ້ເປັນເຈົ້າຈັກມື້? (ອພຍ 34:28) ____________________

ຄ. ໂມເຊຮັບຫຍັງຈາກພະເຈົ້າ? ____________________

**8** ໃນພະທຳຄາລາເຕຍ ໂຊໂລອ້າງເຖິງທັງໂມເຊແລະອັບລາຮາມ.

ກ. ໃນສອງຄົນນັ້ນ ຄົນໃດຢູ່ກ່ອນ? ____________________

ຂ. ຄົນໃດຢູ່ທີຫຼັງ 430 ປີ? ____________________

**9** ໃນຄາລາເຕຍ ບົດທີ 3 ນັ້ນ ກ່າວເຖິງອັບລາຮາມ ແລະໂມເຊ. ຜູ້ໜຶ່ງເປັນຕົວຢ່າງໃນຄວາມເຊື່ອ ອີກຜູ້ໜຶ່ງເປັນຜູ້ທີ່ນຳພະບັນຍັດມາ.

ກ. ອັບລາຮາມເປັນຕົວຢ່າງຝ່າຍໃດ? ____________________

ຂ. ໂມເຊນຳຫຍັງມາ? ____________________

**10** (ທວນຄືນອີກ)

ກ. ອາຈານຜູ້ທີ່ສອນພະທຳໃຫ້ໂຊໂລຊື່ຫຍັງ? ____________________

ຂ. ແມ່ນໃຜທີ່ຢູ່ຫຼັງຈາກອັບລາຮາມຊຶ່ງນຳພະບັນຍັດມາ? ____________________

ຄ. ໂຊໂລຮຽນເລື່ອງກົດໃດເປັນຕົ້ນໃນໂຮງຮຽນທຳ? ____________________

**11** ພະບັນຍັດຂອງໂມເຊເປັນສິ່ງທີ່ດີຫຼາຍເພາະປະກອບໂດຍຄຳສັ່ງຂອງພະເຈົ້າ ຄ້າຍຄືກັບປ້າຍໃນຮູບ ຕໍ່ໄປທີ່ຊີ້ບອກທິດທາງດວງຈັນ. ເຮົາອາດຈະຮູ້ທິດທາງໄດ້ ແຕ່ຍັງໄປບໍ່ເຖິງເພາະບໍ່ມີວິທີໄປ. ໃນ ຮູບຕໍ່ໄປນີ້ ປ້າຍນັ້ນບອກແຕ່ທິດທາງ,ຖ້າຈະໄປໄດ້ກໍມີແຕ່ຍານອາວະກາດ. ໃນຮູບມີນັກບິນອາວະ- ກາດທີ່ຢາກໄປ ດວງຈັນ.

ກ. ປ້າຍນັ້ນມີແຕ່ຊີ້ບອກທິດທາງຢ່າງດຽວ ຫຼື ປ້າຍນັ້ນຈະພາເຮົາເທາະໄປໄດ້?(ອັນໃດຖືກ)

____________________

ຂ. ເພື່ອຈະໄດ້ໄປເຖິງດວງຈັນແທ້ຕ້ອງຂຶ້ນຫຍັງ? ____________________




**12** ທີ່ຈະຮູ້ທາງຢ່າງດຽວບໍ່ພໍ ຕ້ອງມີຍານອາວະກາດດ້ວຍ.




ຖ້ານັກບິນອາວະກາດຈະໄປໂດຍກຳລັງຂອງຕົນ ຜົນຮັບຈະເປັນຢ່າງໃດ? ____________________




**13** ແຕ່ສ່ວນນັກບິນອາວະກາດທີ່ເຂົ້າຍານອາວະກາດ ແລ້ວສາມາດໄປເຖິງໄດ້. ຜົນຮັບຈະເປັນຢ່າງໃດ? (ເລືອກ)

________ ສຳເລັດ ________ ຕົກ

**14** ບໍ່ມີໃຜທີ່ຈະສາມາດເຮັດຕາມພະບັນຍັດຂອງໂມເຊ ເພາະເຮົາເກີດເປັນຄົນບາບ.

ກ. ມີຄົນໃດທີ່ຈະໄດ້ລອດໂດຍຖືພະບັນຍັດຂອງໂມເຊ? ________________________

ຂ. ໂຊໂລສຶກສາເລື່ອງຫຍັງເປັນຕົ້ນໃນໂຮງຮຽນທຳ? __________________________

ຄ. ແມ່ນໃຜເປັນອາຈານສອນ? __________________________________________

**15** ໃຫ້ອ່ານ ຄາລາເຕຍ 3:10 ພວກເຮົາເປັນຄົນອ່ອນກຳລັງແລະເປັນຄົນບາບອີກດ້ວຍ. ຊ່ວຍຕົນບໍ່ໄດ້.

ກ. ຖ້າຢ່າງນັ້ນ ເຮົາຈະຖືກຫຍັງຈາກພະບັນຍັດ? (ເລືອກ)

________ ຖືກປ້ອຍດ່າ ________ ຮັບພະພອນ

ຂ. ແຕ່ສ່ວນຄົນທີ່ໄວ້ວາງໃຈໃນພະເຢຊູ ປຽບທຽບກັບນັກບິນອາວະກາດທີ່ເຂົ້າໃນຍານອາວະກາດ ຄົນນັ້ນຈະໄດ້ຮັບຫຍັງ? (ເລືອກ)

________ ຖືກປ້ອຍດ່າ ________ ຮັບພະພອນ ພະເຈົ້າ

**ພະເຈົ້າ**




**ມະນຸດທີ່ເປັນຄົນບາບ**

**16** ເຫັນວ່າພະບັນຍັດຂອງໂມເຊ ກາຍເປັນເຄື່ອງກີດກັ້ນບໍ່ໃຫ້ມະນຸດທີ່ເຮັດບາບໄປເຖິງພະເຈົ້າໄດ້ຈັກ ເທື່ອ.

ກ. ພະບັນຍັດຂອງໂມເຊຈະນຳເຮົາໄປເຖິງພະເຈົ້າ ຫຼືຈະປິດທາງ? ________________

ຂ. ແມ່ນສິ່ງໃດທີ່ຂັດຂວາງບໍ່ໃຫ້ມະນຸດເຮົາທີ່ເປັນຄົນບາບຫຍັບມາຫາພະເຈົ້າໄດ້? ______

**17** ກັບໄປຄິດເຖິງຕົວຢ່າງນັກບິນອາວະກາດອີກ

— ປ້າຍບອກທາງ ແຕ່ ນຳເຮົາໄປເຖິງບໍ່ໄດ້

— ຍານອາວະກາດ ນຳເຮົາໄປເຖິງໄດ້

ກ. ແມ່ນປ້າຍ ຫຼືຍານອາວະກາດທີ່ປຽບທຽບກັບພະບັນຍັດຂອງໂມເຊ? ______________

ຂ. ອັນໃດປຽບກັບຄວາມເຊື່ອຂອງອັບລາຮາມ? ______________________________

**18** ໃນພະທຳຄາລາເຕຍກ່າວເລື່ອງທັງພະພອນ ແລະການຖືກປ້ອຍດ່າ.

ກ. ອັນໃດມາທາງພະບັນຍັດຂອງໂມເຊ? __________________________________

ຂ. ອັນໃດມາທາງຄວາມເຊື່ອຂອງອັບລາຮາມ? ______________________________

ຄ. ແມ່ນອັນໃດທີ່ເປັນເຄື່ອງກີດກັ້ນລະຫວ່າງພະເຈົ້າທີ່ຊອບທຳ ແລະມະນຸດທີ່ຕົກໃນບາບ?

______________________________________________________________

**19** ກ. ໃນການປະກາດພະທຳ ໂມເຊເນັ້ນຄຳເລື່ອງຫຍັງ? __________________________

ຂ. ອັບລາຮາມ ເປັນຕົວຢ່າງໃນການໃດ? __________________________________

**20** ແມ່ນສິ່ງໃດທີ່ກີດກັ້ນລະຫວ່າງພະເຈົ້າກັບມະນຸດ? ____________________________

*ຈົ່ງຮັບພິຈາລະນາ*

*ໃຫ້ອ່ານ ຄລຕ 2:16 ໃຫ້ຮັບພິຈາລະນາກ່ຽວກັບປ້າຍແລະຍານອາວະກາດທີ່ປຽບທຽບກັບພະບັນຍັດ ແລະຄວາມເຊື່ອ.*

*ກ. ເປັນຫຍັງເຮົາລອດບໍ່ໄດ້ໂດຍພະບັນຍັດຂອງໂມເຊ?*

*ຂ. ເປັນຫຍັງເຮົາໄດ້ລອດໂດຍຄວາມເຊື່ອໃນພະເຍຊູຢ່າງດຽວ?*

**21** ໃຫ້ອ່ານ ຄາລາເຕຍ 3:24-26

ກ. ແມ່ນຫຍັງທີ່ປົກຄອງນຳພາພວກເຮົາແຕ່ເມື່ອກ່ອນ? ____________________

ຂ. ປົກຄອງນຳພາຈົນເຖິງໃຜຈະມາ? ____________________

ຄ. ຈະຖືວ່າເຮົາເປັນຄົນຊອບທຳໂດຍອາໄສຫຍັງ? ____________________

ງ. ຕັ້ງແຕ່ຄວາມເຊື່ອມາແລ້ວ ເຮົາຍັງຢູ່ໃຕ້ການບັງຄັບນັ້ນຕໍ່ໄປບໍ່? ____________________

ຈ. ເຮົາກາຍເປັນລູກຂອງພະເຈົ້າໂດຍທາງຄວາມເຊື່ອ ຫຼືໂດຍພະບັນຍັດ? ____________

ຕຳຕອບ:

***1*** *ກ. ຄາມາລີເອັນ ຂ. ກຸງເຢລູຊາເລັມ ຄ. ພະທຳ*

***2*** *ກ. ພະບັນຍັດຂອງໂມເຊ ຂ. ຄາມາລີເອັນ*

***3*** *ກ. ພາກເດີມ ຂ. ໂມເຊ ຄ. ຄາມາລີເອັນ*

***4*** *ກ. ຕາໂຊ ຂ. ກີລີເກຍ ຄ. ຢິວ ງ. ພິທີຕັດ ຈ. ເຢລູຊາເລັມ*
*ສ. ຄາມາລີເອັນ ຊ. ຂອງໂມເຊ ຍ. ພາກເດີມ*

***5*** *430 ປີ*

***6*** *ໂມເຊ*

***7*** *ກ. ຊີນາອີ ຂ. 40 ຄ. ພະບັນຍັດ*

***8*** *ກ. ອັບລາຮາມ ຂ. ໂມເຊ*

***9*** *ກ. ຄວາມເຊື່ອ ຂ. ພະບັນຍັດ*

***10*** *ກ. ຄາມາລີເອັນ ຂ. ໂມເຊ ຄ. ພະບັນຍັດຂອງໂມເຊ*

***11*** *ກ. ມີແຕ່ຊີ້ບອກທາງ ຂ. ຂຶ້ນຍານອາວະກາດ*

***12*** *ຕົກ (ໄປບໍ່ໄດ້)*

***13*** *ສຳເລັດ*

***14*** *ກ. ບໍ່ມີ ຂ. ພະບັນຍັດຂອງໂມເຊ ຄ. ຄາມາລີເອັນ*

***15*** *ກ. ຖືກປ້ອຍດ່າ ຂ. ຮັບພະພອນ*

***16*** *ກ. ປິດທາງ ຂ. ພະບັນຍັດຂອງໂມເຊ*

***17*** *ກ. ປ້າຍ ຂ. ຍານອາວະກາດ*

***18*** *ກ. ການຖືກປ້ອຍດ່າ ຂ. ພະພອນ ຄ. ພະບັນຍັດ*

***19*** *ກ. ພະບັນຍັດ ຂ. ຄວາມເຊື່ອ*

***20*** *ພະບັນຍັດ*

***21*** *ກ. ພະບັນຍັດ ຂ. ເຖິງພະຄຼິດສະເດັດມາ ຄ. ຄວາມເຊື່ອ ງ. ບໍ່ ຈ. ຄວາມເຊື່ອ*

## ການປະຊຸມບົດທີ 3

# ປະໂຫຍດຂອງພະບັນຍັດ

(ຄລຕ 3:19-27)

*(ໝາຍເຫດ: ໃນບົດນີ້ ເຮົາຈະຜ່ານບໍ່ຮຽນ ຄລຕ 3:10-18 ເທື່ອ. ໃນບົດຕໍ່ ໆ ໄປຈະກັບມາຮຽນສ່ວນໃນສ່ວນນີ້.)*

**1** ໃຫ້ເປີດອ່ານ ຄລຕ 3:19-27 ເຫັນຄຳວ່າ "ຊຶ່ງຖືວ່າເປັນຄົນຊອບທຳ" ໃນຂໍ້ໃດແດ່? ______

________________________________________________

(ຖ້າບໍ່ໄດ້ຂີດກ້ອງຄຳວ່າ "ຊຶ່ງຖືວ່າເປັນຄົນຊອບທຳ" ໃຫ້ຂີດກ້ອງໄວ້.)

**2** ໃຫ້ອ່ານ ຄລຕ 3:27

ກ. ເຮົາຫົ່ມຫຍັງ? ________________________________

ຂ. ແມ່ນຫຍັງທີ່ຫົ່ມເຮົາໄວ້ ກ່ອນທີ່ເຮົາບໍ່ໄດ້ເພິ່ງພະເຢຊູ? ____________________

*ໃຫ້ທ່ານເອົາສໍສີຂຽວຂີດກ້ອງຄຳວ່າ "ຫົ່ມ" ໃນ ຄລຕ 3:27 ແລ້ວໃຫ້ຂີດເສັ້ນຈາກ ຄຳວ່າ "ຊຶ່ງຖືວ່າເປັນຄົນຊອບທຳ" ໃນຂໍ້ 24 ລົງມາຕໍ່ກັບຄຳວ່າ "ຫົ່ມ" ໃນຂໍ້ 27 ການນັ້ນສະແດງວ່າ ແມ່ນໂດຍຄວາມຊອບທຳຂອງພະເຢຊູ ທີ່ເຮັດໃຫ້ເຮົາຄືນດີກັບພະເຈົ້າໄດ້.*

**3** ຫຼັກຄວາມຈິງທີ່ໂປໂລສອນນີ້ ຕໍ່ຕ້ານກັບຈຳພວກຜູ້ທີ່ສອນບໍ່ຈິງ. ພວກເຂົາສອນວ່າຈະໄດ້ລອດໂດຍຖື ພະບັນຍັດຂອງໂມເຊທຸກປະການ. ຖ້າຢ່າງນັ້ນເຂົາເຫັນໂປໂລສອນວ່າ ເຮົາຈະເປັນຄົນຊອບທຳ ໂດຍຄວາມເຊື່ອຢ່າງດຽວ ເຂົາໃຈຮ້າຍຫຼາຍ. ປະຊາຊົນເຫັນເຂົາສອນຢ່າງໜຶ່ງ ເຫັນໂປໂລສອນ ອີກຢ່າງໜຶ່ງ ເຂົາສັບສົນຫຼາຍ. ໃນ ຄລຕ 3:19 ເຂົາຖາມຫຍັງ? __________

________________________________________________

**4** ພວກຜູ້ສອນບໍ່ຈິງ ອາດຈະສອນດັ່ງຕໍ່ໄປນີ້:

*"ໂປໂລນີ້ ສອນວ່າພະບັນຍັດບໍ່ມີຄ່າຫຍັງດອກ. ໂປໂລຍົກແຕ່ຄວາມເຊື່ອຂອງ ອັບລາຮາມທີ່ສຳເລັດໃນພະເຢຊູ. ເພິ່ນຂ້າມປະຫວັດສາດຢູ່ 2000 ປີ ແລ້ວ ຖືວ່າພະບັນຍັດຂອງໂມເຊບໍ່ມີຄ່າເລີຍ".*

ແຕ່ທີ່ຈິງ ພວກຜູ້ສອນບໍ່ຈິງນັ້ນບໍ່ເຂົ້າໃຈຄຳສອນຂອງໂປໂລກ່ຽວເລື່ອງພະບັນຍັດ. ແມ່ນໃນຂໍ້ໃດທີ່ ໂປໂລຊີ້ແຈງວ່າ ພະບັນຍັດບໍ່ຂັດແຍ້ງກັບພະສັນຍາຂອງພະເຈົ້າ? ____________

**5** ໂປໂລເຫັນວ່າພວກຜູ້ທີ່ສອນບໍ່ຈິງບິດເບືອນຄວາມຢ່າງນັ້ນ ເພິ່ນຕອບເຂົາໃນ ຄລຕ 3:21-22. ພະບັນຍັດກໍມີຄ່າຢູ່ ບັນຫາແຕ່ບໍ່ມີຄົນໃດຈັກຄົນທີ່ຖືພະບັນຍັດໄດ້. ຖ້າຈະໄດ້ລອດໂດຍຖືພະບັນຍັດ ກໍຈະບໍ່ມີໃຜໄດ້ລອດຈັກຄົນ. ພະບັນຍັດແມ່ນແຕ່ຊີ້ບອກວ່າບໍ່ມີມະນຸດຈັກຄົນດຽວທີ່ຊອບທຳ.

*ເຮືອນຄົນສະອາດດີ ເປັນຕາຢູ່. ຄອກໝູເປື້ອນເພາະໝູບໍ່ຮູ້ຮັກສາຄວາມສະອາດ. ຖ້າຈະເອົາໂຕໝູຂຶ້ນເຮືອນຄົນ ຄົນຢູ່ຕໍ່ໄປບໍ່ໄດ້ເພາະເຮືອນນັ້ນຈະກາຍເປັນຄອກໝູ. ເຊັ່ນດຽວກັນ ພະຜູ້ເປັນເຈົ້າເປັນອົງຊອບທຳ ມະນຸດເຮົາເປັນຄົນບາບ, ຖ້າພະເຈົ້າຈະເອົາພວກ ເຮົາພ້ອມທັງບາບຂຶ້ນສະຫວັນ ພະເຈົ້າຈະຢູ່ບໍ່ໄດ້ເພາະສະຫວັນນັ້ນຈະກາຍເປັນເມືອງບາບ.*

ຄົນບາບອາດຈະບໍ່ຮູ້ຕົວວ່າເປັນຄົນບາບ ແລະອາດຈະບໍ່ຮູ້ເລື່ອງຄວາມຊອບທຳຂອງພະເຈົ້າ ແຕ່ພະບັນ ຍັດບອກສອນເລື່ອງຄວາມຊອບທຳຂອງພະເຈົ້າເພື່ອໃຫ້ເຮົາຮູ້ຄວາມອະທຳຂອງຕົວເຮົາເອງ. ພະບັນຍັດຊີ້ບອກຄວາມຊອບທຳຂອງພະເຈົ້າ ແລ້ວມີປະໂຫຍດໃນການນັ້ນ. ເຊັ່ນດຽວກັນ ພະບັນຍັດ ສະແດງໃຫ້ເຫັນວ່າ ມະນຸດເຮົາບໍ່ສາມາດຈະປະຕິບັດຕາມພະບັນຍັດໄດ້.

ກ. ແມ່ນພະບັນຍັດ ຫຼືຄວາມເຊື່ອທີ່ຊີ້ບອກທາງຊອບທຳ? ________________________

ຂ. ແຕ່ເຮົາຈະກາຍເປັນຄົນຊອບທຳໂດຍທາງໃດ? ____________________________

**6** ໃນ ຄລຕ 3:19 ໂປໂລຍົກບັນຫາຄື: "ມີພະບັນຍັດໄວ້ເພື່ອຫຍັງ?"

ພະບັນຍັດມີປະໂຫຍດສອງປະການຄື:

- *ເຮັດໃຫ້ເຮົາສຳນຶກບາບ*
- *ຊີ້ບອກທາງລອດໂດຍພະເຢຊູ*

ໃນປະໂຫຍກຕໍ່ໄປນີ້ ໃຫ້ທ່ານຂຽນວ່າໃນປະໂຫຍກນັ້ນພະບັນຍັດ

<u>ໃຫ້ສຳນຶກບາບ</u> ຫຼື <u>ຊີ້ບອກທາງລອດ</u>

ກ. ຂໍ້ 19 ທີ່ວ່າ "ທີ່ເພີ່ມພະບັນຍັດໄວ້ກໍເພື່ອຄວາມຜິດບາບຈະປາກົດ" ________________

ຂ. ຂໍ້ 19 ທີ່ວ່າ "ຈົນກວ່າເຊື້ອສາຍທີ່ໄດ້ຮັບພະສັນຍານັ້ນຈະມາ" __________________

ຄ. ໃນ ຂໍ້ 22 "ພະຄຳພີໄດ້ຮວບຮວມສິ່ງທັງໝົດໃຫ້ເຂົ້າຢູ່ພາຍໃຕ້ອຳນາດຄວາມຜິດບາບ"

______________________________________________________________

ງ. ໃນ ຂໍ້ 22 ອີກ "ເພິ່ນວ່າທຸກຄົນທີ່ເຊື່ອຈະໄດ້ຮັບຂອງປະທານຕາມທີ່ຊົງສັນຍາໄວ້ ຊຶ່ງໄດ້ຊົງໂຜດ ປະທານໂດຍອາໄສຄວາມເຊື່ອໃນພະເຢຊູຄຼິດເປັນຫຼັກ" __________________

ຈ. ຂໍ້ 23 "ເມື່ອຄວາມເຊື່ອຍັງບໍ່ທັນມານັ້ນ ພວກເຮົາໄດ້ຕົກຢູ່ໃນຂອບເຂດອຳນາດຂອງພະບັນຍັດ"___________________________________________________

ສ. ຂໍ້ 23 ອີກ "ຖືກຄວບຄຸມໄວ້ຈົນເຖິງຄວາມເຊື່ອຈະໄດ້ມາປາກົດ". ________________

ຊ. ຂໍ້ 24 "ເພາະສັນນັ້ນ ພະບັນຍັດຈຶ່ງປົກຄອງນຳພາພວກເຮົາໄປ". ________________

ຍ. ຂໍ້ 24 ອີກ "ຈົນເຖິງພະຄຣິດເດັດມາ" ____________________________________

ດ. ຂໍ້ 25 "ແຕ່ບັດນີ້ ຄວາມເຊື່ອໄດ້ມາແລ້ວ ເຮົາທັງຫຼາຍຈຶ່ງບໍ່ຢູ່ໃຕ້ບັງຄັບຂອງຜູ້ປົກຄອງນຳພານັ້ນ ຕໍ່ໄປ" ___________________________________________________

*ຕໍ່ໄປນີ້ຈະຮຽນເລື່ອງປະໂຫຍດຂອງພະບັນຍັດຢ່າງລະອຽດກວ່າ*

*ໃນ ຄລຕ 3:23 ບອກວ່າພະບັນຍັດຄວບຄຸມເຮົາໄວ້ ແລະ*

*ໃນ ຄລຕ 3:24 ພະບັນຍັດປົກຄອງນຳພາເຮົາໄປເຖິງພະເຢຊູ.*

## ຄວບຄຸມ

**7** ຄຳວ່າ "ຄວບຄຸມ" ນັ້ນ ໝາຍຄວາມວ່າເຮົາຖືກຂັງໄວ້ຄືທະຫານ ຫຼືຕຳລວດອາດຂັງ ຄົນໄວ້ ແຕ່ທີ່ພະບັນຍັດຄວບຄຸມເຮົາໄວ້ມີຜົນປະໂຫຍດດີ. ໃຫ້ສັງເກດຮູບຕໍ່ໄປນີ້:




ພະບັນຍັດຂັງເຮົາໄວ້ເພື່ອໃຫ້ເຮົາສຳນຶກວ່າ ບໍ່ມີຫວັງນອກຈາກພະເຢຊູຢ່າງດຽວ. ມີແຕ່ປະຕູປ່ອງ ດຽວທີ່ອອກໄດ້ ຄືປະຕູໄປຫາພະເຢຊູ. ແມ່ນໂດຍການຄວບຄຸມໃນພະບັນຍັດທີ່ເຮົາຮຽນຮູ້ວ່າ ບໍ່ມີ ທາງລອດໃນຕົວເຮົາເອງ. ມີແຕ່ທາງເສັ້ນດຽວຄືທາງໃດ? ________________

## ປົກຄອງນຳພາ

ພະບັນຍັດເປັນທີ່ນຳໜ້າເຮົາໄປຫາພະເຢຊູ ແຕ່ເປັນການນຳໜ້າຢ່າງມີສິດດ້ວຍ. ພວກຄູອາດຈະເປັນຜູ້ນຳໜ້າໃນການສຶກສາແລະມີສິດປົກຄອງດ້ວຍ. ຜູ້ນຳໜ້າ ຫຼືນຳພາ ນຳໄປຄາວດຽວຈົນກວ່າຜູ້ກ່ຽວຮູ້ທາງ. ຄູກໍສອນເດັກຈົນກວ່າເດັກຮູ້ວິຊາ ແລ້ວຄູບໍ່ມີພາລະຕໍ່ໄປ. ເຊັ່ນດຽວກັນ ພະບັນຍັດຊີ້ບອກທາງລອດໃນພະເຢຊູ ແຕ່ຖ້າເຮົາຮັບຮູ້ພະເຢຊູແລ້ວບໍ່ຕ້ອງຢູ່ໃຕ້ການບັງຄັບຂອງພະບັນຍັດຕໍ່ໄປ.

**8** ແມ່ນຜູ້ໃດທີ່ຊີ້ບອກທາງໄປຢ່າງຖືກຕ້ອງ? (ເລືອກ)

ກ. ຜູ້ນຳພາ

ຂ. ຜູ້ສ້າງຖະໜົນ

ຄ. ຜູ້ຈັດອາຫານ

ງ. ຜູ້ຈ່າຍເງິນ

**9** ຖ້າພະບັນຍັດຊີ້ບອກວ່າ ມີແຕ່ທາງເສັ້ນດຽວ ພວກເຮົາມີສິດໄປຕາມທາງອື່ນ ໆ ບໍ່? ______

**10** — ຄູສອນລູກສິດຈົນກວ່າລູກສິດຮູ້ແລ້ວ ບໍ່ມີວຽກຕໍ່ໄປ

— ຜູ້ນຳພາບອກສອນທາງຈົນກວ່າເຂົາຮູ້ທາງແລ້ວ ບໍ່ມີວຽກຕໍ່ໄປ.

— ພະບັນຍັດຊີ້ບອກວ່າໄດ້ລອດທາງພະເຢຊູທາງດຽວ ແລ້ວບໍ່ຕ້ອງການຕໍ່ໄປ.

ພະບັນຍັດສຳເລັດລົງໃນອົງໃດ? ____________________________________

ມີນັກເທດຜູ້ໜຶ່ງທີ່ກ່າວວ່າ:

*ຖ້າເຮົາຈະສອນເລື່ອງຄວາມເຊື່ອຈຶ່ງຈະໄດ້ລອດໂດຍທາງພະເຢຊູ ເຮົາບໍ່ຄວນສອນຂ້າມພະບັນຍັດ ເພາະເປັນແຜນການຂອງພະເຈົ້າທີ່ຈະສຳນຶກເລື່ອງໂທດບາບແລ້ວຈຶ່ງຈະໄດ້ຮູ້ເລື່ອງພະຄຸນຂອງ ພະເຢຊູໃນການຍົກໂທດບາບນັ້ນ. ພະບັນຍັດສອນເລື່ອງໂທດບາບໃນພະຄຳພີເດີມ ແລ້ວ ສອນເລື່ອງການຍົກໂທດບາບໂດຍພະເຢຊູໃນພະຄຳພີໃໝ່. ຖ້າຟ້າມືດໃນເວລາກາງຄືນ ເຮົາ ເຫັນດວງດາວໄດ້ດີ. ເຊັ່ນດຽວກັນຄົນທີ່ເສົ້າໃຈຍ້ອນຄວາມບາບຈະສະແຫວງຫາທາງລອດໂດຍ ພະເຢຊູ. ພະບັນຍັດຊີ້ບອກໃຫ້ເຮົາຮູ້ບາບ ຮູ້ບາບແລ້ວເຮົາຈະສະແຫວງຫາທາງລອດ.*

- *ຖ້າຈະສອນເລື່ອງຄວາມລອດໃຫ້ຄົນທີ່ບໍ່ສຳນຶກຜິດບາບອາດຈະບໍ່ມີຜົນ.*
- *ຖ້າຈະສອນເລື່ອງຄວາມບາບ ແຕ່ບໍ່ສອນເລື່ອງຄວາມເຊື່ອ ເຂົາຈະໝົດຫວັງ.*

**11** ກ. ຖ້າສອນແຕ່ເລື່ອງພະບັນຍັດ ແຕ່ບໍ່ກ່າວເລື່ອງຄວາມລອດໃນພະເຢຊູ ຜູ້ຟັງຈະເປັນຢ່າງໃດ? ______________________________

ຂ. ຖ້າສອນເລື່ອງຄວາມລອດໂດຍທາງພະເຢຊູ ແຕ່ເຂົາບໍ່ຮູ້ເລື່ອງບາບຈະເປັນຢ່າງໃດ?

______________________________

**12** ດັ່ງນັ້ນ ພະບັນຍັດບໍ່ແມ່ນແຕ່ຂໍ້ຫ້າມຢ່າງດຽວ ແຕ່ເປັນທີ່ຈະຊີ້ບອກນຳພາໃຫ້ໄປເຖິງພະເຢຊູ. ພະຄຳ ພີເດີມແນະນຳເລື່ອງພະເຢຊູໂດຍມີສອງວິທີທາງຄື:

- *ຄຳທຳນວາຍທີ່ພະອົງຈະມາ*
- *ການຍົກຕົວຢ່າງເລື່ອງພະເຢຊູ*

ກ. ໃຫ້ອ່ານ ປຖກ 12:3 ແລະ ຄລຕ 3:8, 14,16. ເປັນຄຳທຳນວາຍເລື່ອງພະເຢຊູ ຫຼືເປັນທີ່ປຽບທຽບກັບພະເຢຊູ? ______________________________

ຂ. ໃຫ້ອ່ານ ອພຍ 16:4 ແລະ ຢຮ 6:31-33 ເປັນຄຳທຳນວາຍເລື່ອງພະເຢຊູ ຫຼືເປັນທີ່ປຽບທຽບກັບພະເຢຊູ? ______________________________

ຄ. ໃຫ້ອ່ານ ພະທຳຈົດບັນຊີ 21:9 ແລະ ຢຮ 3:14-15 ເປັນຄຳທຳນວາຍ ຫຼືເປັນຄຳປຽບທຽບ? ______________________________

**13** ພະເຢຊູກໍອ້າງເຖິງພະບັນຍັດອີກດ້ວຍ.

ກ. ໃນໂຢຮັນ 5:39 ແລະ 46 ພະເຢຊູບອກວ່າ ພະບັນຍັດຂອງໂມເຊໃນພະຄຳພີເດີມ ເປັນພະຍານໃຫ້ແກ່ໃຜ? ______________________________

ຂ. ໃນ ລູກາ 24:25-27 ແລະ 44-48 ພະອົງບອກວ່າແມ່ນຄຳທຳນວາຍຂອງໃຜທີ່ສຳເລັດໃນພະອົງເອງ? ______________________________

**14** ໃນເມື່ອພະອົງອະທິບາຍພະຄຳພີໃຫ້ສອງຄົນທີ່ໄປເອມາອູດ ໃຈຂອງເຂົາເປັນຢ່າງໃດ? (ລູກາ 24:32) ______________________________

*ຫວັງວ່າພວກເຮົາຈະມີໃຈຮ້ອນຮົນໃນເມື່ອຈະອ່ານພະຄໍາພີເດີມ.*

| ຄໍາຕອບ: | |
|---|---|
| **1** | *ຂໍ້ 21 ແລະ 24* |
| **2** | *ກ. ຊີວິດພະຄຣິດ ຂ. ຄວາມບາບ* |
| **3** | *ມີພະບັນຍັດໄວ້ເພື່ອຫຍັງ?* |
| **4** | *ໃນ ຂໍ້ 21* |
| **5** | *ກ. ພະບັນຍັດ ຂ. ທາງຄວາມເຊື່ອ* |
| **6** | *ກ. ໃຫ້ສໍານຶກບາບ ຂ. ຊີ້ບອກທາງລອດ ຄ. ໃຫ້ສໍານຶກບາບ*<br>*ງ. ຊີ້ບອກທາງລອດ ຈ. ໃຫ້ສໍານຶກບາບ ສ. ຊີ້ບອກທາງລອດ*<br>*ຊ. ໃຫ້ສໍານຶກບາບ ຍ. ຊີ້ບອກທາງລອດ ດ. ຊີ້ບອກທາງລອດ* |
| **7** | *ທາງພະເຢຊູ* |
| **8** | *ກ ຖືກ* |
| **9** | *ບໍ່ມີ* |
| **10** | *ພະເຢຊູ* |
| **11** | *ກ. ອາດຈະເສົ້າໃຈໜັກແລ້ວໝົດຫວັງ ຂ. ເຂົາອາດຈະນຶກວ່າບໍ່ຕ້ອງການຜູ້ຊ່ອຍ* |
| **12** | *ກ. ຄໍາທໍານວາຍ ຂ. ທີ່ປຽບທຽບ ຄ. ຄໍາປຽບທຽບ* |
| **13** | *ກ. ພະເຢຊູ ຂ. ຂອງໂມເຊ* |
| **14** | *ໃຈຮ້ອນຮົນເໝືອນໄຟ* |